ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ຄະນະບໍລິຫານງານພັກ

1029

ເລກທີ.............../ຄພ.ນວ

ລົງວັນທີ27..ເມສາ 2016

# ມະຕິ

## ກອງປະຊຸມຄົບຄະນະບໍລິຫານງານພັກ ຮ່ວມກັບ ອົງການປົກຄອງນະຄອນຫຼວງວຽງຈັນ ຄັ້ງທີ 3 ສະໄໝທີ VI ເປີດກວ້າງ, (ວັນທີ 21-22 ມີນາ 2016)

ກອງປະຊຸມຄົບຄະນະບໍລິຫານງານພັກ ຮ່ວມກັບ ອົງການປົກຄອງນະຄອນຫຼວງວຽງຈັນ ໄດ້ຈັດຂຶ້ນໃນຕອນບ່າຍຂອງວັນທີ 21-22 ມີນາ 2016, ເວລາ 14:00 ໂມງເປັນຕົ້ນໄປ, ທີ່ຫ້ອງປະຊຸມທັນສະໄໝ ຊັ້ນ 1 ຂອງຫ້ອງວ່າການປົກຄອງ ນວ, ໂດຍພາຍໃຕ້ການເປັນປະທານຂອງ ສະຫາຍ ປອ. ສິນລະວົງ ຄຸດໄພທູນ, ກຳມະການກົມການເມືອງສູນກາງພັກ, ເລຂາຄະນະພັກ, ເຈົ້າຄອງນະຄອນຫຼວງວຽງຈັນ, ມີບັນດາສະຫາຍ ກຳມະການປະຈຳພັກ, ກຳມະການພັກ, ເລຂາຄະນະພັກຮາກຖານ, ພະແນກການ-ອົງການທຽບເທົ່າອ້ອມຂ້າງນະຄອນຫຼວງວຽງຈັນ ເຂົ້າຮ່ວມທັງໝົດ 68 ສະຫາຍ, ຍິງ 12 ສະຫາຍ. ກອງປະຊຸມໄດ້ຄົ້ນຄວ້າ, ປຶກສາຫາລື ແລະ ໃຫ້ທິດຊີ້ນຳບາງບັນຫາດັ່ງນີ້:

I. **ຟັງລາຍງານ ແລະ ໃຫ້ທິດຊີ້ນຳກ່ຽວກັບຜົນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ VIII ແລະ ສະພາປະຊາຊົນ ນະຄອນຫຼວງວຽງຈັນ**, ລາຍງານໂດຍ ປະທານຄະນະສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ I ນະຄອນຫຼວງວຽງຈັນ. ກອງປະຊຸມໄດ້ຕົກລົງ ແລະ ໃຫ້ທິດຊີ້ນຳ ດັ່ງນີ້:

1.1. ສະແດງຄວາມຊົມເຊີຍ ບັນດາສະຫາຍຄະນະພັກ-ອົງການປົກຄອງນະຄອນຫຼວງວຽງຈັນ ກໍ່ຄືຄະນະກຳມະການເລືອກຕັ້ງຂັ້ນນະຄອນຫຼວງວຽງຈັນ, ຂັ້ນເມືອງ ແລະ ບັນດາໜ່ວຍເລືອກຕັ້ງທົ່ວນະຄອນຫຼວງວຽງຈັນ ແລະ ຢູ່ຕ່າງປະເທດ ທີ່ພ້ອມກັນຈັດຕັ້ງປະຕິບັດຖືກຕ້ອງຕາມກົດໝາຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຂອງຄະນະກຳມະການເລືອກຕັ້ງລະດັບຊາດ, ຈຶ່ງໄດ້ຮັບໝາກຜົນ 100% ເກືອບໝົດທຸກຄາດໝາຍ ຄື: ① ດ້ານ ປກຊ-ປກສ ຮັບປະກັນໄດ້ 100%; ② ດ້ານການປະຕິບັດກົດໝາຍ ແລະ ລະບຽບການເລືອກຕັ້ງ, ບໍ່ມີການຊື້ສິດ-ຂາຍສຽງ 100%; ③ ການອອກໄປໃຊ້ສິດເລືອກຕັ້ງບັນລຸໄດ້ 99% ຍ້ອນມີການຂຶ້ນບັນຊີຜູ້ມີສິດເລືອກຕັ້ງບໍ່ຖືກຕ້ອງຊັດເຈນ, ເປັນຕົ້ນຢູ່ເຂດມະຫາວິທະຍາໄລແຫ່ງຊາດ, ຢູ່ກົມກອງ ແລະ ຢູ່ຕ່າງປະເທດ. ④ ການຮັບປະກັນບໍ່ໃຫ້ມີບັດຕາຍ (ຂີດບໍ່ຖືກ) ກໍເກືອບໄດ້ຕາມຄາດໝາຍ. ເວົ້າລວມແລ້ວຜ່ານການກະກຽມໄລຍະພຽງ 2 ເດືອນ ທຽບໃສ່ການເລືອກຕັ້ງຄັ້ງຜ່ານມາມີເວລາຫຼາຍກ່ວາ 4 ເດືອນ ບວກກັບງົບປະມານກໍ່ມີຈຳກັດ, ແຕ່ດ້ວຍຈິດໃຈສູ້ຊົນ, ເຮັດວຽກຢ່າງຂຸ້ນຂ້ຽວຈຶ່ງໄດ້ຮັບຜົນດີຫຼາຍສົມຄວນ, ແຕ່ກໍ່ມີບາງສະ

ພາບບໍ່ຈົບງາມ ເຊັ່ນ: ການຈັດບຸນສົມກິນທານ, ເຕົ້າໂຮມກັນຢູ່ວັດ ແລະ ການຂ້າມໄປທ່ຽວຄອນເສີດຢູ່ຝັ່ງໄທ ໃນວັນເລືອກຕັ້ງ.

1.2. ຕ້ອງໄດ້ກະກຽມຜັນຂະຫຍາຍ ແລະ ສືບຕໍ່ເຮັດວຽກຕາມແຜນທີ່ກົດໝາຍໄດ້ກຳນົດໄວ້, ໝາຍຄວາມວ່າຈະຕ້ອງໄດ້ກະກຽມປະກາດຜົນຂອງການເລືອກຕັ້ງ, ສະຫຼຸບລາຍງານສົ່ງໃຫ້ຄະນະກຳມະການລະດັບຊາດ ແລະ ສະຫຼຸບບັ້ນຍ້ອງຍໍສັນລະເສີນການຮັບໃຊ້ການເລືອກຕັ້ງ; ພ້ອມກັນນັ້ນກໍໃຫ້ກະກຽມບ່ອນປະຈຳການຊົ່ວຄາວຂອງ ສສ ນະຄອນຫຼວງວຽງຈັນ; ກະກຽມກອງປະຊຸມຄັ້ງປະຖົມມະລືກຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ໃນວັນທີ 23/05/2016 ແລະ ແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງຊັດເຈນ ເພື່ອໃຫ້ໄດ້ຮັບໝາກຜົນທີ່ດີ. ສຳລັບຄະນະພັກ-ອົງການປົກຄອງ ນະຄອນຫຼວງວຽງຈັນ ຈະໄດ້ມີແຜນເຄື່ອນໄຫວພັກຂຶ້ນກວ່າເກົ່າ.

1.3. ຂໍສະແດງຄວາມຊົມເຊີຍ ຕໍ່ຜູ້ຮັບລົງສະໝັກເລືອກຕັ້ງ ຈຳນວນ 24 ສະຫາຍ ທີ່ໄດ້ມີຄວາມພະຍາຍາມໃຊ້ສິດທິໃນການອອກຫາສຽງ ແລະ ຊົມເຊີຍຜູ້ທີ່ໄດ້ຮັບເລືອກເຂົ້າມາເປັນສະມາຊິກສະພາແຫ່ງຊາດ ຊຸດທີ VIII ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຈຳນວນ 35 ສະຫາຍ, ຕໍ່ໄປຂໍໃຫ້ພ້ອມກັນປະຕິບັດພາລະບົດບາດ-ໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ.

**II. <u>ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 6 ເດືອນຕົ້ນສົກປີ, ແຜນດັດແກ້ການລົງທຶນ-ງົບປະມານ 6 ເດືອນທ້າຍສົກປີ 2015-2016; ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 3 ເດືອນທ້າຍສົກປີ 2016 ແລະ ປະຈຳປີ 2017</u>**, ລາຍງານໂດຍພະແນກແຜນການ-ການລົງທຶນ, ພະແນກການເງິນ, ພະແນກສ່ວຍສາອາກອນ, ສະຖາບັນຄົ້ນຄວ້າການພັດທະນາເສດຖະກິດ, ນະຄອນຫຼວງວຽງຈັນ ກອງປະຊຸມໄດ້ພິຈາລະນາ ແລະ ໃຫ້ທິດຊີ້ນຳ ດັ່ງນີ້:

ໂດຍພື້ນຖານ ກອງປະຊຸມເຫັນດີນຳການລາຍງານ ຂອງບັນດາພາກສ່ວນທີ່ກ່ຽວຂ້ອງ, ພ້ອມກັນນັ້ນ ກໍໃຫ້ພິຈາລະນາຕື່ມດັ່ງນີ້:

1. ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ:

- **ດ້ານດີ:** ໃນ 6 ເດືອນຕົ້ນສົກປີ 2015-2016 ສະພາບການສ້າງສາພັດທະນາ ແລະ ການລົງທຶນຢູ່ນະຄອນຫຼວງວຽງຈັນ ຍັງສືບຕໍ່ມີບັນຍາກາດດີຂຶ້ນ, ສະແດງອອກ: ການລົງທຶນທົ່ວສັງຄົມປະຕິບັດໄດ້ 18.551,46 ຕື້ກີບ, ລື່ນຄາດໝາຍທີ່ວາງໄວ້ 38,38%. ເດັ່ນກວ່າໝູ່ແມ່ນການປຸກສ້າງຕຶກອາຄານ, ເຮືອນຊານຂອງພາກທຸລະກິດ ແລະ ປະຊາຊົນ ແມ່ນດີໜາຂຶ້ນຫຼາຍ.

- **ດ້ານອ່ອນ ແລະ ຂໍ້ຄົງຄ້າງ:** ເຫັນວ່າຂະບວນການຜະລິດສິນຄ້າຍັງບໍ່ທັນແຂງແຮງ, ຍອດຕົວເລກການຊື້-ຂາຍສິນຄ້າພາຍໃນຍັງບໍ່ຫຼາຍ, ສ້າງຕະຫຼາດ, ສ້າງຮ້ານຊັບພະສິນຄ້າຂຶ້ນມາຫຼາຍ ແຕ່ບໍ່ໄດ້ເຄື່ອນໄຫວ, ບັນຫານີ້ຕ້ອງໄດ້ຄົ້ນຄ້ວາຫາວິທີການແກ້ໄຂຊ່ວຍພາກທຸລະກິດ-ຜູ້ປະກອບການ ເຊັ່ນ: ຕະຫຼາດທາດຫຼວງສະແດວ໌, ວຽງຈັນນິວເວີນ; ສ່ວນຕະຫຼາດທີ່ມີຄວາມແອອັດສັບສົນ, ລົດຕິດ ຕ້ອງໄດ້ໃຫ້ຍ້າຍອອກໄວ ເຊັ່ນ: ຕະຫຼາດຫົວຂົວ.

- ສຳລັບແຜນດັດແກ້ການລົງທຶນ-ງົບປະມານ ແລະ ມາດຕະການຈັດຕັ້ງປະຕິບັດ ໃນ 6 ເດືອນທ້າຍສົກປີ 2015-2016 ໃຫ້ພິຈາລະນາໃໝ່ດັ່ງນີ້:

**+ ຈຸດປະສົງຂອງແຜນດັດແກ້ 6 ເດືອນທ້າຍສົກປີນັ້ນ ແມ່ນແນໃສ່ຮັບໃຊ້ກອງປະຊຸມສຸດຍອດອາຊຽນ ແລະ ກອງປະຊຸມເຈົ້າຄອງນະຄອນຫຼວງອາຊຽນ, ໃນນັ້ນມີ:**

❶ ໂຄງການສ້າງຮູບຈຳລອງຜັງເມືອງນະຄອນຫຼວງວຽງຈັນ ຢູ່ຕຶກສຳນັກງານປົກຄອງນະຄອນຫຼວງວຽງຈັນ;

❷ ໂຄງການສ້າງສວນດອກໄມ້ຢູ່ນະຄອນຫຼວງວຽງຈັນ;

❸ ໂຄງການສ້າງທາງໄປຫາແຫຼ່ງທ່ອງທ່ຽວທຳມະຊາດຕາດຊອນຂອງ (ທ່ານ ຄຳໄພ ຊະນະ);

❹ ໂຄງການສ້ອມແປງເສັ້ນທາງ ແລະ ລອງຕະຄອງຮ່ອງນ້ຳ ບໍ່ໃຫ້ນ້ຳຖ້ວມຂັງຕົວເມືອງ;

❺ ໂຄງການສະໜັບສະໜູນ ໂຄງການກໍ່ສ້າງທາງລົດໄຟ ຢູ່ນະຄອນຫຼວງວຽງຈັນ.

+ ມາດຕະການສືບຕໍ່ຈັດຕັ້ງປະຕິບັດ ໃນ 6 ເດືອນທ້າຍປີ ໃຫ້ເອົາໃຈໃສ່ດັ່ງນີ້: ❶ ໃຫ້ເລັ່ງໃສ່ລະດົມການລົງທຶນຂອງ (FDI) ຈາກພາຍໃນ ແລະ ຕ່າງປະເທດ, ໂດຍສ້າງແຜນຜັງ ແລະ ໂຄງການຮຽກການລົງທຶນຈາກພາຍໃນໃຫ້ຫຼາຍຂຶ້ນ, ເປັນຕົ້ນໂຄງການຜະລິດສິນຄ້າ, ສົ່ງເສີມການເຕີບໂຕຂອງສິນຄ້າຢູ່ພາຍໃນ, ບໍ່ສົ່ງເສີມການເອົາສິນຄ້າຈາກຕ່າງປະເທດມາວາງສະແດງຂາຍ ແກ່ງແຍ່ງແຂ່ງຂັນກັບສິນຄ້າພາຍໃນ, ຄົ້ນຄວ້ານະໂຍບາຍຊ່ວຍຜູ້ປະກອບການ, ໂຮງງານຢູ່ພາຍໃນ ໃນການຫຼຸດຕົ້ນທຶນການຜະລິດລົງ ເພື່ອສາມາດແຂ່ງຂັນກັບສິນຄ້າຕ່າງປະເທດໄດ້ເຊັ່ນ: ຜະລິດຕະພັນຊີແພັກໂນເນຍ..., ຊຸກຍູ້ໃຫ້ຜູ້ປະກອບການຢູ່ພາຍໃນລວມຕົວກັນ ເພື່ອມີທ່າແຮງໃນເວທີການແຂ່ງຂັນກັບຕ່າງປະເທດ. ❷ ເອົາໃຈໃສ່ການແກ້ໄຂຄວາມທຸກຍາກ, ຫຼຸດພົ້ນອອກຈາກນະຄອນດ້ອຍພັດທະນາ, ຊຶ່ງມີ 3 ຕົວຊີ້ວັດສຳຄັນຄື: ຈັງຫວະການເຕີບໂຕຂອງ GDP; ດັດຊະນີພາຍຊັບພະຍາກອນມະນຸດ, ຄວາມບອບບາງທາງດ້ານເສດຖະກິດ ແລະ ຕ້ອງໄດ້ຊີ້ບອກໃນແຜນງານຢ່າງຈະແຈ້ງ ວ່າເຮົາຢູ່ໃນລະດັບທີເທົ່າໃດ? ຈະຍົກຂຶ້ນໃນປີໜ້າເທົ່າໃດ? ແລະ ໄລຍະ 5 ປີຕໍ່ໜ້າເທົ່າໃດ? ໂດຍສະເພາະໃນການຮ່ວມມືກັບການເຊື່ອມໂຍງສາກົນ, ໄພພິບັດທາງທຳມະຊາດ... ເບິ່ງໂຄງການໃໝ່ທີ່ມີ IRR ດີ, ມີປະສິດທິຜົນສູງ, ໂດຍສະເພາະ 6 ໂຄງການບຸກທະລຸ ແລະ 18 ຄາດໝາຍໃຫຍ່ທີ່ວາງໄວ້.

2. **ກ່ຽວກັບແຜນງົບປະມານ:**

- ໃນ 6 ເດືອນຕົ້ນສົກປີ 2015-2016 ມາຮອດວັນທີ 15/03/2016 ປະຕິບັດລາຍຮັບໄດ້ 349,84 ຕື້ກີບ, ເທົ່າກັບ 32,72% ຂອງແຜນປີ, ໃນນັ້ນຊັບສິນຂອງລັດ 15,82 ຕື້ກີບ, ສວຍສາອາກອນ 330,22 ຕື້ກີບ, ພາສີອາກອນ 2,37 ຕື້ກີບ (ນັບທັງສູນກາງ) ແລະ ວິສາຫະກິດ 0,33 ຕື້ກີບ. ປະຕິບັດລາຍຈ່າຍໄດ້ 293,77 ຕື້ກີບ, ເທົ່າກັບ 47,39% ຂອງແຜນການປີ.

- ຄາດໝາຍໃນ 6 ເດືອນທ້າຍສົກປີ 2015-2016 ຕ້ອງສູ້ຊົນປະຕິບັດລາຍຮັບຕາມແຜນການ ແລະ ລື່ນແຜນການທີ່ວາງໄວ້ ຕໍ່ໄປຖ້າເມືອງໃດເກັບລາຍຮັບໄດ້ເກີນແຜນ ແມ່ນມອບໃຫ້ເມືອງນັ້ນນຳໄປໃຊ້ເຂົ້າໃນວຽກງານທີ່ຈຳເປັນຂອງເມືອງ;

- ມາດຕະການຈັດຕັ້ງປະຕິບັດ :

2.1. ຕ້ອງເພີ່ມທະວີຄວາມຮັບຜິດຊອບ ຂອງພະນັກງານນຳພາ ແລະ ພະນັກງານພາສີ-ອາກອນ ໃນການຈັດເກັບລາຍຮັບ ຕ້ອງແບ່ງງານກັນຢ່າງລະອຽດ ລົງປະຊິດກັບທຸກຫົວໜ່ວຍອາກອນ;

2.2. ຕ້ອງເດີນສຳຫຼວດຫົວໜ່ວຍອາກອນ ໃຫ້ລະອຽດຄົບຖ້ວນ ແລະ ກະກຽມບັນດາເອກະສານ ເພື່ອຮັບໃຊ້ການເດີນສຳຫຼວດ 3 ອັນ ໃຫ້ສຳເລັດພາຍໃນເດືອນ 03/2016 ຄື:

① ການກຳນົດຈຳນວນການເກັບພາສີ-ອາກອນ ຂອງພະນັກງານພາສີ-ອາກອນ ແຕ່ລະຄົນໄວ້ ລາວຊື່ຫຍັງ, ລາວເກັບຄົບຖ້ວນຖືກຕ້ອງ ຫຼື ຜິດ? ແລ້ວສົ່ງພະນັກງານພາສີ-ອາກອນຜູ້ອື່ນໄປກວດກາ, ຖ້າກວດເຫັນວ່າເກັບບໍ່ຄົບ

ຖ້ວນຖືກຕ້ອງ ແມ່ນໃຫ້ລາວຮັບຜິດຊອບໃຊ້ແທນຄືນໃຫ້ລັດ, ເວັ້ນເສຍແຕ່ລາວຍອມຮັບວ່າລາວເກັບຜິດແທ້ ແລະ ໃຫ້ໄປໄລ່ລຽງເອົານຳຫົວໜ່ວຍທີ່ມີພັນທະຕ້ອງເສຍພາສີ-ອາກອນຄືນ.

② ສຳຫຼວດທຸກປະເພດລາຍຮັບຢູ່ໃນບ້ານວ່າ ເສຍພາ-ສີອາກອນຖືກຕາມກົດໝາຍ ຫຼື ບໍ່? ການເສຍພາສີຢູ່ຍ່ານທາງດິນແດງ, ທາງປູຢາງ, ທາງເບຕົງ ຈະມີອັດຕາແຕກຕ່າງກັນ. ມອບໃຫ້ເມືອງລົງນຳພາບ້ານລົງສຳຫຼວດຄືນໃໝ່ໃຫ້ຖືກກັບຄວາມເປັນຈິງ.

③ ເດີນສຳຫຼວດເຮືອນຊານຕ່າງໆ ມີໃບອະນຸຍາດປຸກສ້າງຖືກກົດໝາຍ ຫຼື ບໍ່? ແຈ້ງລາຄາ ແລະ ເສຍອາກອນການເຊົ່າເຮືອນ, ທີ່ດິນ ແລະ ສະຖານທີ່ຕ່າງໆ ຂອງບຸກຄົນ, ນິຕິບຸກຄົນ ແລະ ຂອງລັດ ຖືກຕ້ອງຄົບຖ້ວນ ຫຼື ບໍ່ ມອບໃຫ້ພະແນກການເງິນ ແລະ ພະແນກສ່ວຍສາອາກອນ ລົງສົມທົບ ແລະ ດຳເນີນການສຳຫຼວດຢູ່ເມືອງ ແລະ ບ້ານໃດໜຶ່ງກ່ອນ ເມື່ອໄດ້ຮັບຜົນດີແລ້ວ ຈຶ່ງນຳໄປຈັດຕັ້ງຢູ່ເມືອງ ແລະ ບ້ານອື່ນໆຕໍ່ໄປ, ໂດຍໃຫ້ນຳໃຊ້ເງິນຈຳນວນໜຶ່ງ ໃນບ້ວງນະຄອນໂຮ່ຈິມິນ ຊ່ວຍເຫຼືອນະຄອນຫຼວງວຽງຈັນ 100.000 ໂດລາສະຫະລັດ ຜ່ານມາ.

2.3. ຕ້ອງລົງໄປສຶກສາອົບຮົມ ແລະ ກຳບັນດາຫົວໜ່ວຍວິສາຫະກິດ ໃຫ້ທົ່ວເຖິງ ແລະ ຄົບຖ້ວນ ເພື່ອຊຸກຍູ້ເຂົາເຈົ້າ ປະຕິບັດຕາມຂໍ້ແຂ່ງຂັນ 5 ດີ ແລະ ໃຫ້ຕິດຄຳຂວັນນີ້ໃສ່ທຸກຫ້ອງການຂອງວິສາຫະກິດ ໃຫ້ກາຍເປັນຂະບວນການທີ່ກວ້າງຂວາງ ແລະ ຟົດຟື້ນ.

**III.** **<u>ຟັງການລາຍງານ ແລະ ໃຫ້ທິດຊີ້ນຳກ່ຽວກັບ ສະພາບການຄຸ້ມຄອງລັດຖະກອນ, ບັນຊີພະນັກງານລັດຖະກອນຈະໄດ້ໃຫ້ພັກການຮັບເບ້ຍບຳນານ ໃນປີ 2016 ແລະ ແຜນໂກຕ້າລັດຖະກອນໃໝ່ ປະຈຳປີ 2017. ລາຍງານໂດຍພະແນກພາຍໃນ, ຄະນະຈັດຕັ້ງ ນວ, ກອງປະຊຸມໄດ້ຕົກລົງ ແລະ ໃຫ້ທິດຊີ້ນຳ ດັ່ງນີ້:</u>**

ໂດຍພື້ນຖານ ເຫັນດີຕາມການລາຍງານຂອງພະແນກພາຍໃນ, ຄະນະຈັດຕັ້ງ ນະຄອນຫຼວງວຽງຈັນ ແລະ ການປະກອບຄຳເຫັນຂອງຜູ້ແທນກອງປະຊຸມ, ພ້ອມກັນນັ້ນ ກໍ່ໃຫ້ເອົາໃຈໃສ່ຕື່ມ ດັ່ງນີ້:

1. ໃຫ້ແຕ່ລະເມືອງ, ພະແນກການ, ຫ້ອງການ ກວດກາເບິ່ງຄືນການກຳນົດຕຳແໜ່ງງານ ເພື່ອໃຫ້ສອດຄ່ອງກັບພາລະບົດບາດ, ໜ້າທີ່, ຄວາມຮັບຜິດຊອບ ແລະ ໜ້າວຽກງານຕົວຈິງ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍ ລັດຖະກອນ ແລະ ລະບຽບການຂອງກະຊວງພາຍໃນ ວາງອອກ.

2. ໃຫ້ເອົາໃຈໃສ່<u>ສົ້ນເຊົາ</u> ໃນການຮັບ, ບັນຈຸ, ສັບຊ້ອນພະນັກງານ-ລັດຖະກອນ ຕ້ອງເລືອກເຟັ້ນເອົາຜູ້ທີ່ໄດ້ມາດຖານ ມີຄວາມຮູ້ຄວາມສາມາດແທ້, ຕ້ອງເຮັດໃຫ້ຖືກຕ້ອງຕາມກົດໝາຍ ສ່ວນການປະຕິບັດນະໂຍບາຍໃຫ້ແກ່ລູກພະນັກງານທີ່ມີຄຸນງາມຄວາມດີຕໍ່ການປະຕິວັດ ແມ່ນໃຫ້ພິຈາລະນາບົນພື້ນຖານ, ມາດຖານຂອງຕຳແໜ່ງງານຕົວຈິງ, ຖ້າໄດ້ມາດຖານເທົ່າກັນ ແມ່ນໃຫ້ເບິ່ງລູກຫຼານວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ແລະ ຜູ້ມີຜົນງານຕໍ່ການປະຕິວັດນັ້ນກ່ອນ, ໝາຍຄວາມວ່າ ຕ້ອງເບິ່ງສົ້ນເຊົາໃຫ້ຈະແຈ້ງ. ທິດທາງໃນຕໍ່ໜ້າ ແມ່ນໃຫ້ບູລິມະສິດແກ່ຜູ້ທີ່ມີລະດັບ ປະລິນຍາເອກ, ປະລິນຍາໂທ ແລະ ປະລິນຍາຕີ, ພິເສດແມ່ນຜູ້ທີ່ມີພອນສະຫວັນ, ມີຄວາມຮັບຜິດຊອບສູງໃຫ້ໄດ້ເໝືອນດັ່ງພາກທຸລະກິດ ເຂົາຄັດເລືອກເອົາພະນັກງານ ຈຶ່ງຈະຊອກໄດ້ຜູ້ທີ່ມີມັນສະໝອງດີ, ມີລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ, ມີຄວາມຊຳນານ, ເປັນຊ່ຽວຊານ ມາເຮັດວຽກນຳລັດຢ່າງມີປະສິດທິຜົນ, ສາມາດເຮັດວຽກເຊື່ອມໂຍງກັບສາກົນໄດ້; ບໍ່ເຮັດຄືຜ່ານມາອີກ, ຮັບເອົາພະນັກງານເຂົ້າມາຫຼາຍ ແຕ່ບໍ່ໄດ້ມາດຖານ, ລະບຽບຫຼັກການມີໝົດແລ້ວ ແຕ່ບໍ່ຕັ້ງໃຈປະຕິບັດໃຫ້ຖືກຕ້ອງ, ຢາກຮູ້ວ່າເມືອງ, ພະແນກການ, ອົງການ ສ້າງຄົນໄດ້ດີ ຫຼື

ບໍ່? ແມ່ນຂຶ້ນກັບການຮັບຄືນມີມາດຖານດີເຂົ້າມາ ຫຼື ບໍ່, ຕໍ່ໜ້ານີ້ ຕ້ອງຊອກຫາຜູ້ດີໆເກົ່າໆ ມາພັດທະນາວຽກງານຂອງລັດໃຫ້ໄດ້.

3. ໃຫ້ເບິ່ງສົ້ນອອກຢ່າງເໝາະສົມ ພະນັກງານ-ລັດຖະກອນທີ່ເຖິງອາຍຸກະສຽນ ກະກຽມຮັບບໍານານ ແມ່ນໃຫ້ປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ, ນະໂຍບາຍຂອງລັດ ແລະ ກົດລະບຽບຂອງພັກ ເປັນສ່ວນໃຫຍ່ (90%) ຂຶ້ນເມືອ.

- ສໍາລັບກໍາມະການປະຈໍາພັກ, ກໍາມະການພັກ,ຄະນະພັກເມືອງ, ຄະນະພັກຮາກຖານ, ຄະນະໜ່ວຍພັກ, ກວດເບິ່ງຢ່າງໜ້ອຍໃຫ້ປະຕິບັດໜ້າທີ່ໄປເຄິ່ງສະໄໝ ຫຼື ຂ້ອນສະໄໝ ກອງປະຊຸມໃຫຍ່ຂອງຕົນກ່ອນ ຈຶ່ງພິຈາລະນາ, ສໍາຄັນຕ້ອງ ເອົາໃຈໃສ່ສ້າງການນໍາໃໝ່ຂຶ້ນມາ, ສ້າງຜູ້ທີ່ຈະມາເປັນການນໍາປ່ຽນແທນຕົນໃຫ້ໄດ້, ການນໍາຊຸດໃໝ່ຕ້ອງມີຄວາມສາ ມາດໃນການນໍາພາສືບການນໍາຊຸດເກົ່າ ແລະ ທັງກໍາແໜ້ນນະໂຍບາຍ ແລະ ຍຶດໝັ້ນໃນອຸດົມການຂອງພັກເຮົາ.

- ໃຫ້ຄະນະກວດກາພັກ ກວດກາຕີລາຄາເບິ່ງຜູ້ຍ້າຍໄປຮັບໜ້າທີ່ບ່ອນໃໝ່ແລ້ວ ເອົາລົດຮັບໃຊ້ໄປນໍາມີຫຼາຍໜ້ອຍປານໃດ? ດ້ານຫຼັກການແລ້ວ ຕ້ອງຮັກສາລົດໄວ້ຮັບໃຊ້ວຽກງານພາຍໃນເມືອງ, ພະແນກການ, ອົງການເກົ່າ, ໃຫ້ຍ້າຍໄປແຕ່ລະຄົນ; ການພິຈາລະນາວ່າຈະໃຫ້ຍ້າຍລົດໄປນໍາໄດ້ ຫຼື ບໍ່ນັ້ນ ແມ່ນໃຫ້ໜ່ວຍພັກ, ສະມາຊິກພັກ ຢູ່ບ່ອນນັ້ນ ເປັນຜູ້ຕົກລົງ, ຖ້າຢູ່ບ່ອນນັ້ນບໍ່ມີໜ່ວຍພັກ ກໍ່ໃຫ້ອົງການຈັດຕັ້ງມະຫາຊົນ (ກໍາມະບານ, ແມ່ຍິງ, ຊາວໜຸ່ມ) ເປັນຜູ້ພິຈາລະນາ, ແຕ່ເມື່ອເຫັນດີໃຫ້ຍົກຍ້າຍລົດໄປບ່ອນອື່ນແລ້ວ ກໍ່ບໍ່ໃຫ້ເລັ່ງທວງຄະນະພັກ-ອົງການປົກຄອງຊື້ລົດໃໝ່ໃຫ້ພາກສ່ວນຂອງຕົນ.

4. **ກ່ຽວກັບແຜນໂກຕ້າລັດຖະກອນໃໝ່ປະຈໍາປີ 2017:** ໃຫ້ຈັດບຸລິມະສິດແກ້ໄຂໂກຕາລັກຖະກອນໃໝ່ໃຫ້ແກ່ພະແນກຖະແຫຼງຂ່າວ-ວັດທະນະທໍາ ແລະ ທ່ອງທ່ຽວ ເພື່ອຈະບັນຈຸເຂົ້າໃນຕໍາແໜ່ງງານຕ່າງໆຂອງສະຖານີໂທລະພາບນະຄອນຫຼວງວຽງຈັນ ທີ່ຈະສ້າງສໍາເລັດ ແລະ ເປີດການນໍາໃຊ້ໃນວັນທີ 23 ເດືອນ 8 ປີ 2016, ຕໍາແໜ່ງງານຮັບຜິດຊອບເວບໄຊ (website) ຂອງ ນວ ທີ່ສ້າງສໍາເລັດ ແລະ ຈະເປີດນໍາໃຊ້ໃນວັນທີ 8 ເດືອນ 4 ປີ 2016.

- ໃຫ້ຄົ້ນຄ້ວາຕື່ມກ່ຽວກັບພະນັກງານບ້ານໃນ 5 ໜ່ວຍງານ ມີ 15 ຕໍາແໜ່ງນັ້ນຄວນຈະໃຫ້ເປັນລັດຖະກອນ ຫຼື ບໍ່, ແຕ່ຢ່າງໜ້ອຍກໍຄວນໃຫ້ເຂົາເຈົ້າໄດ້ຮັບເງິນອຸດໜູນເທົ່າກັບຄ່າແຮງງານຕໍ່າສຸດ (9 00.000 ກີບ/ເດືອນ) ແລະ ເຮັດແນວໃດຈຶ່ງຈະເຮັດໃຫ້ບ້ານມີແຫຼ່ງລາຍຮັບພຽງພໍກັບລາຍຈ່າຍທີ່ຈໍາເປັນໃຫ້ແກ່ພະນັກງານ ແລະ ບໍລິຫານວຽກງານອັນຈໍາເປັນຂອງຕົນ, ຄົ້ນຄ້ວາເບິ່ງເງິນອຸດໜູນໃຫ້ ປກສ ແລະ ກອງຫຼອນບ້ານຕື່ມອີກ, ໂດຍເຮັດເປັນພັນທະໃຫ້ປະຊາຊົນ ພາຍໃນບ້ານຕ້ອງໄດ້ປະກອບສ່ວນ ແລະ ກໍານົດຈໍານວນ ປກສ ແລະ ກອງຫຼອນບ້ານໃຫ້ເໝາະສົມກັບຄວາມສາມາດລ້ຽງດູຂອງປະຊາຊົນ. ມອບໃຫ້ກອງບັນຊາການ ປກຊ-ປກສ ຄົ້ນຄ້ວາຊ່ວຍຕື່ມບົນພື້ນຖານຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພແກ່ປະຊາຊົນຢູ່ພາຍໃນບ້ານ.

**IV.** **ກ່ຽວກັບແຜນການປູກຕົ້ນໄມ້, ບູລະນະສ້ອມແປງ-ອະນາໄມເສັ້ນທາງ, ທໍ່ລະບາຍນໍ້າ, ລອງຕະຄອງຮ່ອງລະບາຍນໍ້າ ໃນຕົວເມືອງ ແລະ ແຜນການຕ້ານແລ້ງ-ຕ້ານຖ້ວມ ໃນປີ 2016**, ລາຍງານໂດຍ ພະແນກກະສິກໍາ ແລະ ປ່າໄມ້, ພະແນກໂຍທາທິການ ແລະ ຂົນສົ່ງ, ອົງການພັດທະນາ ແລະ ບໍລິຫານຕົວເມືອງວຽງຈັນ. ກອງປະຊຸມໄດ້ຕົກລົງ ແລະ ໃຫ້ທິດຊີ້ນໍາ ດັ່ງນີ້:

**1. ກ່ຽວກັບແຜນບູລະນະສ້ອມແປງ-ອະນາໄມເສັ້ນທາງ, ທໍ່ລະບາຍນໍ້າ ຂອງພະແນກໂຍທາທິການ ແລະ ຂົນສົ່ງ:**

1.1. ໃຫ້ສືບຕໍ່ກໍ່ສ້າງ ແລະ ສ້ອມແປງເສັ້ນທາງ ຈຳນວນ 6 ເສັ້ນທີ່ມີບັນຫາ, ໂດຍໃຫ້ໄປເຈລະຈາເບິ່ງຄືນສັນຍາວ່າແນວໃດ ໄດ້ຈັດຕັ້ງປະຕິບັດຮອດຂັ້ນໃດແລ້ວ, ໄດ້ປະຕິບັດຖືກຕ້ອງຄົບຖ້ວນຕາມສັນຍາແລ້ວຫຼືບໍ່, ຖ້າບໍ່ປະຕິບັດຕາມສັນຍາ ຫຼື ບໍ່ກໍ່ສ້າງຕໍ່ ກໍໃຫ້ເລັ່ງທວງບໍລິສັດທີ່ຮັບເໝົາກໍ່ສ້າງທາງນັ້ນ ອອກມາຍອມຮັບວ່າບໍ່ມີຄວາມສາມາດເຮັດຕໍ່ໄດ້, ບໍ່ສັ່ງລົບລ້າງສັນຍາກ່ອນ ເພື່ອບໍ່ໃຫ້ເຂົາມາທວງໃຫ້ນະຄອນຫຼວງວຽງຈັນ ຈ່າຍເງິນຄືນຄ່າກໍ່ສ້າງຂອງເຂົາຜ່ານມາ.

1.2. ຖ້າທາງບໍລິສັດຍອມວ່າ ບໍ່ສາມາດປະຕິບັດໂຄງການຕໍ່ໄດ້ ແມ່ນໃຫ້ທາງບໍລິສັດ ເກຼດທາງຄືນໃຫ້ປະຊາຊົນສາມາດໄປ-ມາຫາສູ່ກັນໄດ້ຢ່າງເປັນປົກກະຕິ, ສ່ວນງົບປະມານສ້ອມແປງ ແມ່ນມອບໃຫ້ບໍລິສັດຮັບເໝົາເປັນຜູ້ຮັບຜິດຊອບ ແລະ ຕໍ່ໄປນີ້ໂຄງການໃດບໍ່ມີແຫຼ່ງທຶນຊຳລະ ແມ່ນບໍ່ໃຫ້ເຮັດເດັດຂາດ ເພາະຈະເປັນການທ່ວງດຶງການພັດທະນາ.

1.3. ນະໂຍບາຍຂອງນະຄອນຫຼວງວຽງຈັນ ກ່ຽວກັບເສັ້ນທາງຄົມມະນາຄົມແມ່ນ: ທຸກເສັ້ນທາງທົ່ວນະຄອນຫຼວງວຽງຈັນ ຕ້ອງສ້ອມແປງໃຫ້ໄປມາຫາສູ່ໄດ້ ທັງລະດູແລ້ງ ແລະ ລະດູຝົນ, ສ່ວນງົບປະມານນັ້ນ ແມ່ນໃຫ້ມີການສົມທົບກັນລະຫວ່າງປະຊາຊົນ, ບໍລິສັດ ແລະ ລັດ, ໃນເຂດທີ່ເປັນຊຸມຊົນ, ມີການຜະລິດສິນຄ້າ ແລະ ມີການຄ້າຂາຍຫຼາຍ ແມ່ນໃຫ້ສ້າງເສັ້ນທາງດີ, ສ່ວນຢູ່ເຂດນອກ ຫຼື ເຂດຫ່າງໄກສອກຫຼີກ ໃຫ້ສ້າງເປັນເສັ້ນທາງທຳມະດາ, ຮອດບ້ານເຮືອນຫຼາຍກໍ່ແປງໃຫ້ດີບໍ່ໃຫ້ມີຂີ້ຝຸ່ນ, ອອກນອກບ້ານໄປກໍ່ເຮັດທາງດິນແດງກ່ອນ, ໃຫ້ຢຸດຕິການເຮັດໂຄງການກໍ່ສ້າງເສັ້ນທາງຕາມສູດ 30-70% ຜູ້ໃດຕົກລົງໃຫ້ຜູ້ນັ້ນຊຳລະເອົາເອງ ເພາະນະຄອນຫຼວງວຽງຈັນຍັງເປັນໜີ້ຫຼາຍພັນຕື້ກີບ. ງົບປະມານສ້ອມແປງເສັ້ນທາງມີຫຼາຍໜ້ອຍເທົ່າໃດ ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ອອກມາຖະແຫຼງໃຫ້ປະຊາຊົນນະຄອນຫຼວງວຽງຈັນ ໄດ້ຮັບຊາບ ເຂົ້າໃຈນຳ ແລະ ລະດົມການຊ່ວຍພັກລັດຕື່ມ.

1.4. ສຳລັບຈຸດໃໝ່ ບ່ອນໃດທີ່ພະແນກໂຍທາທິການ ແລະ ຂົນສົ່ງ ແລະ ອົງການພັດທະນາ ແລະ ບໍລິຫານຕົວເມືອງວຽງຈັນ ຍັງບໍ່ທັນຂຶ້ນແຜນກວມເອົານັ້ນ ກໍ່ໃຫ້ເອົາເຂົ້າໃນແຜນສ້ອມແປງແກ້ໄຂຕື່ມເປັນຕົ້ນ: ຈຸດບ້ານພະຂາວເຂດຫໍປະຊຸມແຫ່ງຊາດ ຫຼັກ 6 ຫາເຂດດອນໜູນ, ຈຸດສະໜາມບິນ ແລະ ຈຸດມູນເດີໄນ ເຂດເມືອງສີໂຄດຕະບອງ ໃຫ້ຮີບຮ້ອນແກ້ໄຂຕ້ອງເຮັດຄອງລະບາຍນ້ຳໃຫ້ດີ, ຕ້ອງເດັດຂາດເຮັດຕາມແຜນຜັງເມືອງກຳນົດແລ້ວ, ຜູ້ໃດຕັນ, ຖົມທໍ່ລະບາຍນ້ຳໃຫ້ໄປຍົກຮື້ອອກໝົດ, ເຮັດຄອງ ຫຼື ທໍ່ໃສ່ໃຫ້ພຽງພໍກັບການໄຫຼຂອງນ້ຳໃນລະດັບສູງສຸດ ແລະ ຕ້ອງໃຫ້ສຳເລັດກ່ອນລະດູຝົນ ບໍ່ໃຫ້ມີສະພາບນ້ຳຖ້ວມຂັງເດັດຂາດ, ຕ້ອງຮັບປະກັນ 100% ໃຫ້ແກ່ການຈັດກອງປະຊຸມສຸດຍອດອາຊຽນຢູ່ນະຄອນຫຼວງວຽງຈັນ ໃນເດືອນ ກັນຍາ 2016.

1.5 ໃຫ້ຈັດສັນເສັ້ນທາງຢູ່ບ່ອນແອອັດ-ລົດຕິດຫຼາຍ ເປັນຕົ້ນຢູ່ຕະຫຼາດຫົວຂົວ, ຕະຫຼາດທາດຫຼວງ, ຂົວຮ່ອງແຊງ ຫາ ໄຟແດງໜອງໜ້ຽງ ຫຼັກ 6, ຮີບຮ້ອນກໍ່ສ້າງເສັ້ນທາງໄຟແດງໂພນທັນຜ່ານບຶງທາດຫຼວງ ເຊື່ອມຕໍ່ໃສ່ບ້ານໂນນຫວາຍ ເພື່ອຊ່ວຍລະບາຍລົດຕື່ມ ໃຫ້ແລ້ວທັນກອງປະຊຸມສຸດຍອດອາຊຽນ.

1.6. ກ່ຽວກັບແຜນລວງຕະຄອງຮ່ອງນ້ຳໃນຕົວເມືອງເພື່ອບໍ່ໃຫ້ນ້ຳຖ້ວມຂັງ: ໂດຍພື້ນຖານເຫັນດີຕາມການລາຍງານຂອງ ອພບ, ຍັງຄານຳງົບປະມານ 800 ລ້ານກີບນັ້ນ ໃຫ້ໄປສົມທົບກັບພະແນກການເງິນ ຈັດຫາມາແກ້ໄຂຈຸດທີ່ຮ້ອນດ່ວນກ່ອນ, ນອກນັ້ນໃຫ້ລະດົມນຳປະຊາຊົນ, ບໍລິສັດຫ້າງຮ້ານທີ່ດຳເນີນທຸລະກິດຢູ່ລຽບຕາມແຄມຕະຄອງຮ່ອງນ້ຳຊ່ວຍ.

**2. ກ່ຽວກັບແຜນການປູກຕົ້ນໄມ້ຂອງພະແນກກະສິກຳ ແລະ ປ່າໄມ້:**

2.1. ໃຫ້ທຸກພາກສ່ວນຮີບຮ້ອນຈັດຕັ້ງປະຕິບັດນະໂຍບາຍປູກຕົ້ນໄມ້ຢູ່ນະຄອນຫຼວງວຽງຈັນ ຕາມມະຕິຂອງກອງປະຊຸມໃຫຍ່ຄັ້ງທີ VI ຂອງອົງຄະນະພັກນະຄອນຫຼວງວຽງຈັນ, ໂດຍປຸກລະດົມຢ່າງກ້ວາງຂວາງທົ່ວເຖິງ ແລະ ແຂງແຮງ ໃຫ້ຊາວນະຄອນຫຼວງວຽງຈັນ ຜູ້ທີ່ມີອາຍຸແຕ່ 18 ປີ (ນັບແຕ່ມີສິດເລືອກຕັ້ງ) ຂຶ້ນໄປ ອອກມາຮ່ວມຂະບວນການປູກຕົ້ນໄມ້ໃຫ້ໄດ້ຜູ້ລະ 2 ຕົ້ນຂຶ້ນໄປຕໍ່ປີ. ສໍາລັບຜູ້ທີ່ບໍ່ມີທີ່ດິນປູກ ກໍໃຫ້ເຂົ້າຮ່ວມປູກຢູ່ແຄມຖະໜົນ ແລະ ສວນສາທາລະນະ ທີ່ທາງການກໍານົດໃຫ້ປູກໄດ້.

2.2. ຂະບວນການປູກຕົ້ນໄມ້ລວມໃນປີນີ້ແມ່ນໃຫ້ສຸມໃສ່ປູກຕົ້ນໄມ້ທໍາງົວ ແລະ ຕົ້ນໄມ້ແຄນຢູ່ 2 ຟາກຖະໜົນ 450 ປີ ແລະ ເສັ້ນທາງເລກ 10 (ສາມແຍກດອນໜູນ-ທ່າງ່ອນ): ຕົ້ນໄມ້ທີ່ຈະນໍາໄປປູກຕ້ອງໃຫ້ມີລວາມສູງ 2,5 ແມັດຂຶ້ນໄປ. ວິທີປູກໃຫ້ເອົາໃຈໃສ່ດັ່ງນີ້:

- ກໍານົດແຜນຜັງ ແລະ ບ່ອນຂຸດຂຸມປູກໄວ້ກ່ອນໃຫ້ຊັດເຈນ (ພະແນກກະສິກໍາ ແລະ ປ່າໄມ້ ແລະ ພະແນກໂຍທາທິການ ແລະ ຂົນສົ່ງຮັບຜິດຊອບ).

- ນໍາໃຊ້ລົດຈັກຂອງບໍລິສັດເຮັດທາງ ຂຸດຂຸມປູກກ້ວາງ-ເລິກໃຫ້ຖືກມາດຕະຖານ-ເຕັກນິກ (ພະແນກໂຍທາທິການ ແລະ ຂົນສົ່ງ ສົມທົບກັບ ພະແນກກະສິກໍາ ແລະ ປ່າໄມ້ ລະດົມບໍລິສັດ ສໍາລັບຢູ່ຖະໜົນ 450 ປີ ຖ້າຈໍາເປັນກໍ່ອອກນໍ້າມັນລົດຊ່ວຍ, ສໍາລັບຢູ່ເສັ້ນທາງເລກ 10 ໃຫ້ຄິດໄລ່ເຂົ້າໃນແຜນກໍ່ສ້າງເສັ້ນທາງເລີຍ).

- ເອົາດິນ ແລະ ຝຸ່ນປູກລົງໃສ່ຂຸມປູກຕົ້ນໄມ້ໄວ້ໃຫ້ພຽງພໍ.

- ໄລຍະເວລາປູກໃຫ້ເລີ່ມແຕ່ເດືອນ ເມສາ 2016 ນີ້ເປັນຕົ້ນໄປ.

- ເຕັກນິກໃນການປູກ ແລະ ການບົວລະບັດຮັກສາຫຼັງການປູກ: ແມ່ນມອບໃຫ້ ພະແນກກະສິກໍາ ແລະ ປ່າໄມ້ຮັບຜິດຊອບ.

- ຕົ້ນໄມ້ທີ່ຈະນໍາໄປປູກ: ມອບໃຫ້ພະແນກກະສິກໍາ ແລະ ປ່າໄມ້ ຈັດຫາມາຂາຍໃຫ້, ຖ້າບໍ່ມີຢູ່ພາຍໃນກໍນໍາເຂົ້າມາຈາກຕ່າງປະເທດ, ລາຄາຕົ້ນໄມ້ໃຫ້ລວມທັງຄ່າຂຸດຂຸມ, ຄ່າດິນປູກ, ຄ່າຝຸ່ນ ແລະ ຄ່າບົວລະບັດຮັກສາ, ແຕ່ລາຄາສູງສຸດບໍ່ໃຫ້ເກີນ 1.000 000 ກີບ/ຕົ້ນ, ຖ້າຕົ້ນໄມ້ຕາຍ ພະແນກກະສິກໍາ ແລະ ປ່າໄມ້ ຕ້ອງຮັບຜິດຊອບນໍາໄປປ່ຽນແທນ.

- ງົບປະມານປູກ: ໃຫ້ລະດົມສະມາຊິກພັກ, ພະນັກງານ, ທະຫານ, ຕໍາຫຼວດ, ເຈົ້າຂອງວິສາຫະກິດຂອງລັດ ແລະ ເອກະຊົນ, ນັກຮຽນ, ນັກສຶກສາ, ພ້ອມດ້ວຍພໍ່ແມ່ປະຊາຊົນ ຊາວນະຄອນຫຼວງວຽງຈັນ ໄປຊື້ມາປູກ. ໂດຍສະເພາະຜູ້ທີ່ມີທີ່ດິນຢູ່ແຄມຖະໜົນ 2 ເສັ້ນດັ່ງກ່າວ, ໂດຍການເປັນແບບຢ່າງຂອງກໍາມະການຄະນະປະຈໍາພັກ, ກໍາມະການພັກ ນະຄອນຫຼວງວຽງຈັນ, ສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ, ບັນດາທ່ານເຈົ້າເມືອງ, ຫົວໜ້າກອງບັນຊາການ, ຫົວໜ້າພະແນກການ ແລະ ອົງການຂອງລັດທຽບເທົ່າພະແນກທົ່ວນະຄອນຫຼວງວຽງຈັນ ໃນການຈັດຕັ້ງນໍາພາກັນໄປຊື້ຕົ້ນໄມ້ນໍາພະແນກກະສິກໍາ ແລະ ປ່າໄມ້ ເພື່ອເອົາໄປປູກຢູ່ຕາມຂຸມປູກທີ່ທາງພະແນກກະສິກໍາ ແລະ ປ່າໄມ້ ແລະ ພະແນກໂຍທາທິການ ແລະ ຂົນສົ່ງໄດ້ກະກຽມໄວ້.

2.3 ນອກຈາກປູກຢູ່ຖະໜົນ 450 ປີ ແລະ ເສັ້ນທາງເລກ 10 ແລ້ວ ໃຫ້ແຕ່ລະເມືອງ, ບ້ານ ແລະ ແຕ່ລະພາກສ່ວນຈັດຕັ້ງກັນປູກຕົ້ນໄມ້ ແລະ ຕົ້ນໄມ້ປະດັບຢູ່ຕາມເສັ້ນທາງອື່ນໆ ແລະ ຢູ່ຕາມສໍານັກງານ, ໂຮງຮຽນ, ໂຮງໝໍ, ສູນການຄ້າ ແລະ ສາທາລະນະອື່ນໆຕື່ມ.

V <u>ກ່ຽວກັບການຮັບຮອງເອົາບັນດາເອກະສານ ແລະ ຫົວຂໍ້ທີ່ຈະສະເໜີຕໍ່ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ,</u> ລາຍງານໂດຍຫ້ອງວ່າການສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນວ, ຄະນະຈັດຕັ້ງ, ພະແນກຍຸຕິທຳ, ກອງປະຊຸມໄດ້ຕົກລົງ ແລະ ໃຫ້ທິດຊີ້ນຳ ດັ່ງນີ້:

1. ໃຫ້ບັນດາເມືອງ, ກອງບັນຊາການ, ພະແນກການ ແລະ ອົງການລັດທຽບເທົ່າພະແນກ ຮີບຮ້ອນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກນະຄອນຫຼວງວຽງຈັນ, ໂດຍສະເພາະ ບັນດາໂຄງການບຸກທະລຸ ແລະ 18 ຄາດໝາຍໃຫຍ່ ອອກເປັນນິຕິກຳ ແລະ ເອກະສານກ່ຽວກັບບັນຫາສຳຄັນພື້ນຖານຂອງນະຄອນຫຼວງວຽງຈັນ ໂດຍແຍກໃຫ້ລະອຽດ ດັ່ງນີ້:

1.1. ອັນໃດຈະເອົາໄປຜ່ານກອງປະຊຸມຄະນະພັກ, ກອງປະຊຸມອົງການປົກຄອງ ແລະ ກອງປະຊຸມສະພາປະຊາຊົນ ນະຄອນຫຼວງວຽງຈັນ, ໃນນັ້ນ:

- ບັນຫາທີ່ຈະນຳໄປຜ່ານກອງປະຊຸມ ຄະນະພັກນະຄອນຫຼວງວຽງຈັນ ແມ່ນກ່ຽວກັບບຸກຄະລາກອນ ແລະ ບັນຫາການເມືອງ.
- ບັນຫາທີ່ຈະນຳໄປຜ່ານກອງປະຊຸມອົງການປົກຄອງ ແມ່ນນິຕິກຳ ແລະ ບັນຫາສຳຄັນຂອງນະຄອນຫຼວງວຽງຈັນ ທີ່ບໍ່ສາມາດນຳໄປຜ່ານກອງປະຊຸມສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້, ຍ້ອນຫຼາຍຫົວຂໍ້ໂພດ.
- ບັນຫາທີ່ຈະນຳໄປຜ່ານ ກອງປະຊຸມສະພາປະຊາຊົນ ແມ່ນບັນດານິຕິກຳ ແລະ ບັນຫາສຳຄັນພື້ນຖານຂອງນະຄອນຫຼວງວຽງຈັນ ທີ່ເປັນບັນຫາໃຫຍ່ ແລະ ມີຜົນກະທົບກ້ວາງຂວາງ ເຊັ່ນ: ບັນຫາສະລຳ, ຄາດໝາຍໃຫຍ່ໃນການປົດປ່ອຍແຮງງານຂອງຊາວນາອອກຈາກການປັກດຳ ແລະ ກ່ຽວເຂົ້າໃຫ້ໄດ້ 10% ຕໍ່ປີ.

1.2. ອັນໃດທີ່ນະຄອນຫຼວງວຽງຈັນຕັດສິນເອງໄດ້ ແລະ ອັນໃດຕ້ອງໄດ້ລາຍງານລັດຖະບານ **ຕົວຢ່າງ**: ນະຄອນຫຼວງວຽງຈັນ ຕົກລົງອະນຸມັດໃຫ້ໂຄງການລົງທຶນຂອງລັດ ໃນຂອບເຂດ 50 ຕື້ກີບລົງມາ; ສ່ວນໂຄງການລົງທຶນໂດຍກົງຂອງເອກະຊົນ ( FDI ) ແມ່ນຂຶ້ນກັບວ່ານອນໃນບັນຊີໂຄງການທີ່ສົ່ງເສີມ ຫຼື ບໍ່ສົ່ງເສີມ.

2. ມອບໃຫ້ພະແນກຍຸຕິທຳນະຄອນຫຼວງວຽງຈັນ ເປັນຜູ້ປະສານເອົານຳແຕ່ລະພາກສ່ວນ ແລະ ສ້າງເປັນແຜນການສ້າງນິຕິກຳ 5 ປີ ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ອົງການປົກຄອງນະຄອນຫຼວງວຽງຈັນ.

3. ມອບໃຫ້ ທ່ານ ວາທີປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ປະທານຄະນະສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 1 ປະຈຳນະຄອນຫຼວງວຽງຈັນ ປຶກສາຫາລື ແລະ ຄັດເລືອກເອົາບັນຫາຫົວຂໍ້, ເອກະສານ ແລະ ນິຕິກຳ ທີ່ສຳຄັນ ແລະ ຈຳເປັນກວ່າໝູ່ ເພື່ອນຳເຂົ້າພິຈາລະນາ, ຕົກລົງ ຮັບຮອງເອົາຢູ່ໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຶ່ງຄາດຄະເນຈະໄຂຂຶ້ນໃນວັນທີ 23/5/2016 ໃນຕໍ່ໜ້ານີ້.

**VII.** <u>ຟັງການລາຍງານ ແລະ ໃຫ້ທິດຊີ້ນຳ ຕໍ່ບົດສະຫຼຸບການເຄື່ອນໄຫວຊີ້ນຳ-ນຳພາລວມ ແລະ ການຈັດຕັ້ງປະຕິບັດວຽກງານພົ້ນເດັ່ນຂອງຄະນະພັກ ແລະ ອົງການປົກຄອງ ນະຄອນຫຼວງວຽງຈັນ ໃນ 6 ເດືອນຕົ້ນປີ ແລະ ແຜນວຽກຈຸດສຸມໃນ 6 ເດືອນທ້າຍປີ</u>. ລາຍງານໂດຍ ຫົວໜ້າຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ. ກອງປະຊຸມໄດ້ຕົກລົງ ແລະ ໃຫ້ທິດຊີ້ນຳ ດັ່ງນີ້:

ໂດຍພື້ນຖານ ເຫັນດີຕາມການລາຍງານຂອງ ຫົວໜ້າຫ້ອງວ່າການປົກຄອງ ນະຄອນຫຼວງວຽງຈັນ, ແຕ່ໃຫ້ເບິ່ງຕື່ມ 3 ວຽກງານທີ່ສຳຄັນ ຄື:

1. ກ່ຽວກັບວຽກງານພັກ-ພະນັກງານ ໃຫ້ເອົາໃຈໃສ່ 3 ວຽກສຳຄັນ ຄື: ① ກະກຽມເຂົ້າຮ່ວມກອງປະຊຸມເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ, ທີ່ສູນກາງຈັດຂຶ້ນເປັນ 3 ຊຸດ ຄື: ຊຸດທີ 1 ລະຫວ່າງໃນວັນທີ 28 ມີນາ 2016 – 01 ເມສາ 2016, ຊຸດທີ 2 ໃນລະຫວ່າງວັນທີ 04-08 ເມສາ 2016 ແລະ ຊຸດທີ 3 ໃນລະຫວ່າງວັນທີ 25-29 ເມສາ 2016; ② ຫຼັງຈາກນັ້ນໃຫ້ກະກຽມກອງປະຊຸມເຊື່ອມຊຶມ ມະຕິ X ຂອງພັກ ແລະ ມະຕິ VI ຂອງອົງຄະນະພັກນະຄອນຫຼວງວຽງຈັນ ໃຫ້ແກ່ສະມາຊິກພັກ-ພະນັກງານ ທົ່ວນະຄອນຫຼວງວຽງຈັນ (ມອບໃຫ້ຄະນະຈັດຕັ້ງ ແລະ ຄະນະໂຄສະນາອົບຮົມ ຮັບຜິດຊອບກະກຽມ) ແລະ ປະສານເອົາເນື້ອໃນກັບສູນກາງ ມາຊຽນເປັນ 5 ບົດຂອງນະຄອນຫຼວງວຽງຈັນ ແລະ ເຜີຍແຜ່ເຊື່ອມຊຶມບົດລະ 1 ວັນ; ③ ໃຫ້ຈັດກອງປະຊຸມຄະນະບໍລິຫານງານພັກຮ່ວມກັບ ອົງການປົກຄອງ ນວ ຕື່ມອີກ, ເພາະຍັງມີຫຼາຍເອກະສານສຳຄັນ ທີ່ຈະຕ້ອງໄດ້ພິຈາລະນາ, ເປັນຕົ້ນ ເລື່ອງ

ການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ກ່ຽວກັບບັນຫາແຮງງານ ແລະ ຊາວຄ້າຂາຍຕ່າງປະເທດ ແລະ ສືບຕໍ່ປຶກສາຫາລືກ່ຽວກັບບຸກຄະລາກອນ ຕື່ມອີກ ເຊັ່ນ: ໂຄງປະກອບຂອງສະພາປະຊາຊົນ ນວ ແລະ ໂຄງປະກອບຂອງອົງການປົກຄອງນະຄອນຫຼວງວຽງຈັນ ລວມທັງການທາບທາມເອົາຮອງເຈົ້າຄອງ ຮອບ 2.

2. ກ່ຽວກັບການພັດທະນາຕົວເມືອງ ໃຫ້ເອົາໃຈໃສ່ກະກຽມໃຫ້ແກ່ການຕ້ອນຮັບກອງປະຊຸມໃຫຍ່ອາຊຽນ ຊຶ່ງເປັນວຽກງານທີ່ເລັ່ງຮ້ອນ, ໂດຍໃຫ້ສືບຕໍ່ປະຕິບັດຕາມຄຳສັ່ງ 02/ນຍ ວ່າດ້ວຍການຈັດສັນຄວາມເປັນລະບຽບຮຽບຮ້ອຍ, ບ່ອນຈອດລົດ, ບ່ອນຂາຍເຄື່ອງ, ມ້າງເທີບ-ເງີບ ໃຫ້ເລີ່ມເຮັດໃຫ້ແລ້ວໄວ ເພື່ອເຮັດໃຫ້ນະຄອນຫຼວງວຽງຈັນມີສະເໜ່ ແລະ ສວຍງາມ, ໂດຍສະເພາະ ເສັ້ນທາງທ່າລໍາ-ຖະໜົນໄກສອນ ພົມວິຫານ ຕ້ອງເຮັດເປັນແບບຢ່າງ.

3. **ດ້ານເສດຖະກິດ:** ທາງອອກສຳຄັນແມ່ນມີ 2 ວິທີຄື: ① ເຮັດໃຫ້ຫົວໜ່ວຍ ຫຼື ຖານອາກອນທີ່ເຮົາມີສືບຕໍ່ເຄື່ອນໄຫວໃຫ້ມີການຂະຫຍາຍຕົວ ພາຍໃຕ້ 5 ຂໍ້ແຂ່ງຂັນ ມາຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ. ② ຊອກຫາວິທີທີ່ຈະສ້າງຖານອາກອນຂຶ້ນມາໃໝ່ ໃນໄລຍະ 6 ເດືອນຕໍ່ໜ້າ ແລະ ໃຫ້ຈັດຕັ້ງຄະນະເຈລະຈາ ກູ້ຢືມເງິນນຳ ບໍລິສັດບໍຣິງໂກ ສປ ຈີນ ໃນອັດຕາດອກເບ້ຍ 2%/ປີ, ໂດຍເອົາໂຄງການຄ້ຳປະກັນ ແລະ ບໍລິສັດ ຫວຽດນາມປາຊີຟິກ ຂອງ ສສ ຫວຽດນາມ, ຖ້າໂຄງການໃດເຫັນວ່າເຮັດການຜະລິດສິນຄ້າທົດແທນໄດ້ ຕ້ອງຕັດສິນໃຈລົງທຶນໃສ່ ເຊັ່ນ:

3.1. ໂຄງການໂທລະພາບນະຄອນຫຼວງວຽງຈັນ (ໃນຮູບແບບຮຸ້ນສ່ວນກັນ).

3.2. ໂຄງການສ້າງບ່ອນເກັບເງິນນຳລົດຜ່ານຖະໜົນ 450 ປີ ທັງສອງສົ້ນ.

3.3. ໂຄງການສ້າງບ່ອນຈອດລົດ ໃນຕົວເມືອງ.

**ຄະນະບໍລິຫານງານພັກ ນະຄອນຫຼວງວຽງຈັນ**

ພັກປະຊາຊົນປະຕິວັດລາວ
ຄະນະພັກນະຄອນຫຼວງວຽງຈັນ

ດຣ.ສິນລະວົງ ຄຸດໄພທູນ